CHIAs

## ພາລະບົດບາດ ແລະ ໜ້າທີ່ຂອງພະນັກງານ ຂັບລົດ

| | |
|---|---|
| **ຈັດຊື້ຈັດຈ້າງພະນັກງານເລກທີ:** | 24-SB1874 |
| **ວັນທີເປີດຮັບສະໝັກ:** | 09 ກັນຍາ 2024 |
| **ວັນທີ່ປິດການສອບຖາມ:** | 13 ກັນຍາ, 2024 |
| **ວັນທີປິດຮັບສະໝັກ:** | 19 ກັນຍາ, 2024 |
| **ສະຖານທີ ປະຈຳການ:** | ແຂວງ ສະຫວັນນະເຂດ |
| **ຕິດຕໍ່ພົວພັນ:** | ຈິນດາວັນ ສິງຫາລາດ;<br>E-mail: chindavanh.chias@gmail.com<br>ໂທ: 020 91731133 |

**ຄວາມເປັນມາ:**
ສະມາຄົມ ສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (ສສຮ) ແມ່ນອົງການຈັດຕັ້ງສັງຄົມລາວ ທີ່ເຮັດວຽກກ່ຽວກັບການສົ່ງເສີມສຸຂະພາບ ແລະ ການປົກປ້ອງທາງສັງຄົມສໍາຫລັບກຸ່ມປະຊາກອນທີ່ມີເບາະບາງ ແລະ ມີຄວາມສ່ຽງ. ສສຮ ມີຈຸດປະສົງໃນການສະໜັບສະໜູນຊຸມຊົນເພື່ອການມີສ່ວນຮ່ວມໃນການບັນລຸຍຸດທະສາດຍຸຕິພະຍາດວັນນະໂລກໂດຍເນັ້ນໃສ່ເປົ້າໝາຍ 15 ເມືອງໃນແຂວງສະຫວັນນະເຂດ. ໂຄງການດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນໂດຍ L' Initiative ແລະ Expertise France.

**ພາບລວມໂດຍຫຍໍ້ຂອງຕໍາແໜ່ງ:**
ພາລະບົດບາດ ແລະ ໜ້າທີ່ ສະບັບນີ້ແມ່ນໄດ້ອະທິບາຍເຖິງຄວາມຮັບຜິດຊອບຫຼັກ ແລະ ຄຸນສົມບັດຂອງພະນັກງານຂັບລົດທີ່ຈະມີບົດບາດສໍາຄັນໃນການສະໜັບສະໜູນເປົ້າໝາຍຂອງໂຄງການໃນການເພີ່ມການເຂົ້າເຖິງການບໍລິການວັນນະໂລກໃນບັນດາປະຊາກອນທີ່ມີຄວາມສ່ຽງທີ່ແຂວງສະຫວັນນະເຂດ, ສປປ ລາວ.
ຄວາມຮັບຜິດຊອບສະເພາະ:

1. ການບໍລິການໃນການຮັບ-ສົ່ງ:

   - ຮັບ-ສົ່ງພະນັກງານໂຄງການ, ພະນັກງານສາທາລະນະສຸກຊຸມຊົນ ແລະ ຜູ້ຕິດເຊື້ອວັນນະໂລກເດີນທາງໄປສະຖານທີ່ທີ່ໃຫ້ບໍລິການຕ່າງໆພາຍໃນແຂວງສະຫວັນນະເຂດ.
   - ຮັບປະກັນການໄປຮັບ-ສົ່ງພະນັກງານ ແລະ ຜູ້ໄດ້ຮັບຜົນປະໂຫຍດໃນການເຂົ້າຮ່ວມກິດຈະກໍາຂອງໂຄງການ, ກິດຈະກໍາເຜີຍແຜ່, ແລະ ການນັດໝາຍຂອງແພດຢ່າງທັນເວລາ.
   - ຊ່ວຍເຫຼືອໃນການຂົນສົ່ງອຸປະກອນການແພດ, ອຸປະກອນສຶກສາໄປສະຖານທີ່ໂຄງການ ແລະ ສະຖານທີ່ໃຫ້ບໍລິການດ້ານສຸຂະພາບ.

2. ການບໍາລຸງຮັກສາພາຫະນະ:

   - ປະຕິບັດການກວດກາຍານພາຫະນະເປັນປະຈໍາ ແລະ ຮັກສາລົດຂອງໂຄງການໃຫ້ຢູ່ໃນສະພາບທີ່ດີ.
   - ຮັບປະກັນຄວາມສະອາດຂອງພາຫະນະ ແລະ ນໍ້າມັນໃຫ້ມີຄວາມພ້ອມນໍາໃຊ້ຕະຫຼອດເວລາ.
   - ລາຍງານບັນຫາກົນຈັກ ຫຼື ສິ່ງທີ່ຈໍາເປັນຈະຕ້ອງບໍາລຸງຮັກສາໃຫ້ກັບຜູ້ຈັດການໂຄງການ.

3. ວາງແຜນໃນການເດີນທາງ ແລະ ການນໍາໃຊ້ເສັ້ນທາງ

   - ວາງແຜນການນໍາໃຊ້ເສັ້ນທາງທີ່ດີທີ່ສຸດເພື່ອເຂົ້າເຖິງຊຸມຊົນພື້ນທີ່ມີຄວາມສ່ຽງຫ່າງໄກສອກຫຼີກຢ່າງມີປະສິດທິພາບ.

- ມີຄວາມຮູ້ ແລະ ລຶ້ງເຄີຍກັບສະພາບເສັ້ນທາງທ້ອງຖິ່ນ ແລະ ເສັ້ນທາງທາງເລືອກອື່ນໆ.
- ຊ່ວຍໃນການກຳນົດເສັ້ນທາງໃນການເຂົ້າເຖິງເຂດທີ່ເຂົ້າເຖິງຍາກພາຍໃນແຂວງ.

4. ທາງດ້ານຄວາມປອດໄພ:

- ປະຕິບັດຕາມກົດຈະລາຈອນຢ່າງເຂັ້ມງວດ.
- ຮັບປະກັນຄວາມປອດໄພຂອງຜູ້ໂດຍສານ ແລະ ສຳພາລະໃນທຸກການເດີນທາງ.
- ມີຄວາມຄຸ້ນເຄີຍ ແລະ ປະຕິບັດຕາມລະບຽບການຄວາມປອດໄພຂອງອົງກອນ

5. ການຈົດບັນທຶກ:

- ຮັກສາການບັນທຶກທີ່ຖືກຕ້ອງຂອງການເດີນທາງທັງຫມົດ, ລວມທັງການບັນທຶກຫລັກກິໂລ, ການເຕີມມັນເຊື້ອໄຟ, ແລະ ການບຳລຸງຮັກສາ.
- ບັນທຶກເຫດການ ຫຼື ບັນຫາທີ່ພົບໃນລະຫວ່າງການເດີນທາງ.

6. ການຕິດຕໍ່ພົວພັນກັບຊຸມຊົນ:

- ເຮັດໜ້າທີ່ປະສານງານລະຫວ່າງທີມງານໂຄງການ ແລະ ຊຸມຊົນທ້ອງຖິ່ນ ເມື່ອມີຄວາມຈຳເປັນ.
- ຊ່ວຍສ້າງສາຍສຳພັນກັບສະມາຊິກຊຸມຊົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວໂຄງການ.

7. ສະໜັບສະໜູນການເຜີຍແຜ່ກິເຈະກຳ ແລະ ການຮັກສາຄວາມລັບ:

- ຊ່ວຍເຫຼືອໃນການສ້າງຕັ້ງແລະການທຳລາຍອຸປະກອນສຳລັບກິດຈະກຳຂອງຊຸມຊົນ.
- ສະໜັບສະໜູນການແຈກຢາຍວັດຖຸ, ອຸປະກອນເຜີຍແຜ່ຂໍ້ມູນຂ່າວສານໃນເວລາເຄື່ອນໄຫວຢູ່ພາກສະໜາມ.
- ຮັກສາຄວາມລັບຢ່າງເຄັ່ງຄັດກ່ຽວກັບຂໍ້ມູນຄົນເຈັບ ແລະລາຍລະອຽດຂອງໂຄງການ.

**ເງື່ອໄຂ ແລະ ຄຸນນະສົມບັດ:**

1. ມີໃບຂັບຂີ່ ແລະ ມີປະຫວັດການຂັບຂີ່ສະອາດ.(ໃບຂັບຂີ່ແມ່ນຕ້ອງສາມາດນຳໃຊ້ໄດ້ເຖິງປັດຈຸບັນ).
2.ມີປະສົບການຢ່າງໜ້ອຍ 3 ປີ ໃນການເປັນພະນັກງານຂັບລົດ, ມັກໃນວຽກງານພັດທະນາ ຫຼື ວຽກງານດ້ານສຸຂະພາບ.
3. ມີຄວາມຮູ້ກ່ຽວກັບຕາໜ່າງຖະໜົນຫົນທາງ ແລະ ພູມມີສາດຂອງແຂວງສະຫວັນນະເຂດ.
4. ທັກສະການບຳລຸງຮັກສາລົດຂັ້ນພື້ນຖານ.
5. ຄວາມຄ່ອງແຄ້ວໃນການສື່ສານພາສາລາວ ແລະ ຖ້າຫາກມີຄວາມຮູ້ກ່ຽວກັບພາສາທ້ອງຖິ່ນຍິ່ງເປັນການດີ.
6. ທັກສະການສື່ສານ ແລະ ການພົວພັນລະຫວ່າງບຸກຄົນ ແລະ ຄູ່ຮ່ວມງານ.
7.ສາມາດເຮັດວຽກຕາມເວລາທີ່ມີການປ່ຽນແປງໄດ້ລວມທັງຕອນເຊົ້າ, ຕອນແລງ ແລະທ້າຍອາທິດ ເມື່ອມີຄວາມຈຳເປັນ.
8. ທັກສະການຂຽນ, ອ່ານ, ຟັງ ໜັງສື ແລະ ຕົວເລກພື້ນຖານເພື່ອຈຸດປະສົງການຈົດບັນທຶກ.
9. ມີຄວາມຮັບຮູ້, ແລະ ເຂົ້າໃຈຕໍ່ຄວາມເທົ່າທຽມທາງດ້ານບົດບາດຍິງ-ຊາຍ, ໂດຍບໍ່ມີພຶດຕິກຳຈຳແນກລັງກຽດ.

**ທາງດ້ານຫລັກການຈັນຍາບັນຈັນຍາທຳ:**

ພະນັກງານທຸກຄົນທີ່ມີສັນຍາຮ່ວມງານກັບ ສສຮ ຕ້ອງປະຕິບັດຕາມຫລັກການດ້ານຈັນຍາບັນຈັນຍາທຳຂອງ ສສຮ ແລະ ຜູ້ໃຫ້ທຶນຢ່າງເຂັ້ມງວດ.

CHIAs

**ວິທີການສະໝັກ:**

ສຳຫລັບຜູ້ທີ່ມີຄວາມສົນໃຈຢາກສະໝັກເປັນຄູ່ຮ່ວມງານກັບ ສສຮ ສາມາດສົ່ງໜັງສືຂໍສະໝັກວຽກພ້ອມຂັດຕິດຊີວະປະຫວັດພ້ອມດ້ວຍລາຍຊື່ຜູ້ທີ່ຢັ້ງຢືນ 03 ທ່ານ, ມາທີ່: ອີເມວ chindavanh.chias@gmail.com ຕາມເອກະສານຈັດຊື້ຈັດຈ້າງເລກທີ (24-SB1874) ແລະ ວັນເວລາທີ່ຖືກກຳນົດໄວ້ໃນຂໍ້ມູນຂ້າງເທິງ.

**ໂອກາດທີ່ເທົ່າທຽມ**

ສສຮ ໃຫ້ໂອກາດທຸກຄົນຢ່າງທົ່ວເຖີງ ແລະ ເທົ່າທຽມໃນການຮັບສະໝັກ ລວມທັງການສົ່ງເສີມ ແລະ ໃຫ້ຄວາມສຳຄັນທາງດ້ານຄວາມຫລາກຫລາຍເຊັ່ນ: ກຸ່ມຄົນຫລາກຫລາຍທາງເພດ, ແມ່ຍິງ, ຊົນເຜົ່າ, ບຸກຄົນທີ່ມີຄວາມພິການ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດວັນນະໂລກ, ເອດສ ແລະ ໄຂ້ຍຸ້ງ. ພວກເຮົາເຊື່ອວ່າ ການມີສ່ວນຮ່ວມຂອງທຸກພາກສ່ວນເທົ່ານັ້ນທີ່ສາມາດຍຸດຕິພະຍາດວັນນະໂລກ ແລະ ເອດສ.